# ວັດພຸທລາວັນ ອິນຄໍປະເຣຕິດ (ຜູ້ຄຸ້ມຄອງຊັບສິນ & ຜູ້ຈັດການຊັບສິນ ໄດ້ຖືກແຕ່ງຕັ້ງຂຶ້ນ) ປະກາດເຖິງສະມາຊິກແລະຜູ້ທີ່ຈະເຂົ້າເປັນສະມາຊິກ

ວັດພຸທລາວັນ ອິນຄໍປະເຣຕິດ ("ສະມາຄົມ") ໄດ້ມີເຣື່ອງຟ້ອງຮ້ອງສືບຕໍ່ກັນມາທີ່ສານສູງແຫ່ງຣັດນິວຊາວເວລ. ບັນຫາອັນນຶ່ງທີ່ເກີດຂຶ້ນເນື່ອງຈາກການພິພາດກັນ ແມ່ນການລະບຸວ່າແມ່ນໃຜເປັນສະມາຊິກປັດຈຸບັນຂອງສະມາຄົມ.

ໃນວັນທີ 15 ເດືອນທັນວາ (12) 2017, ທ່ານຜູ້ພິພາກສາ Justice Parker ປະຈຳສານສູງແຫ່ງຣັດ ນິວຊາວເວລ ໄດ້ເຮັດຄຳສັ່ງອອກມາດັ່ງນີ້:

> **ມີຄຳສັ່ງວ່າ** Mitchell Ball ("ຜູ້ຄຸ້ມຄອງຊັບສິນ") ຂອງ BPS Recovery ທີ່ຢູ່ ຊັ້ນທີ 18, 201 Kent Street, Sydney NSW 2000 ໄດ້ຖືກແຕ່ງຕັ້ງ, ໂດຍປາສຈາກການຄ້ຳປະກັນ, ໃຫ້ເປັນຜູ້ຄຸ້ມຄອງແລະຈັດການຊັບສິນແລະໃຫ້ເປັນ ຜູ້ຖືກຟ້ອງຮ້ອງຄົນທີສີ່ ("ສະມາຄົມ") ຕາມເງື່ອນໄຂທີ່ລະບຸໄວ້ໃນທີ່ນີ້ ແລະ ປະຕິບັດໄປຈົນກວ່າຈະມີຄຳສັ່ງໃໝ່ຈາກສານ.
>
> **ມີຄຳສັ່ງວ່າ** ໃຫ້ຜູ້ຄຸ້ມຄອງຊັບສິນປະຕິບັດດັ່ງນີ້:
>
> (ກ) ໃຫ້ຮັບເອົາ, ແລະ ຮັບຮອງເອົາຫຼືປະຕິເສດໃນທັນທີ, ຕໍ່ການສເນີຂໍເຂົ້າເປັນສະມາຊິກຂອງສະມາຄົມ, ຮັບເອົາໄດ້ທຸກເວລາໃນລະຫວ່າງທີ່ຕົນຖືກແຕ່ງຕັ້ງໃຫ້ເປັນຜູ້ຄຸ້ມຄອງແລະຈັດການຊັບສິນຂອງສະມາຄົມ, ອີງຕາມວັກ 4 ຂອງທັມມະນູນຂອງສະມາຄົມ;
>
> (ຂ) ໃຫ້ແຈ້ງຕໍ່ຜູ້ສມັກຂໍເຂົ້າເປັນສະມາຊິກໃຫ້ຮູ້ວ່າຕົນຖືກຮັບເອົາ ແລະ ຂໍໃຫ້ຜູ້ສມັກຈ່າຍເງິນ ຕາມຈຳນວນທີ່ລະບຸໄວ້ພາຍໃຕ້ທັມມະນູນຂອງວັດ ໂດຍຖືວ່າເປັນຄ່າຂໍເຂົ້າເປັນສະມາຊິກແລະຄ່າບຳລຸງປະຈຳປີ ພາຍໃນເວລາ 28 ວັນ ຫຼັງຈາກທີ່ຜູ້ສມັກໄດ້ຮັບການຕອບຮັບນັ້ນແລ້ວ, ໂດຍອີງຕາມວັກ 4(c) ຂອງທັມມະນູນຂອງສະມາຄົມ;

ມີຄຳສັ່ງວ່າ, ເພື່ອໃຫ້ສອດຄ່ອງກັບວັດຖຸປະສົງຂອງ ຂໍ້ (ກ) ທີ່ກ່າວມາຂ້າງເທິງ, ເງື່ອນໄຂຂອງການຂໍເຂົ້າເປັນສະມາຊິກ ຂອງສະມາຄົມ (ເອກະສານຕິດຄັດ 1 ຂອງທັມມະນູນຂອງສະມາຄົມ) ທີ່ກ່າວວ່າຕ້ອງມີຜູ້ສເນີແລະໃຫ້ມີຄົນທີສອງເປັນຜູ້ຮັບຮອງເອົານັ້ນ ເງື່ອນໄຂຂໍ້ນີ້ໃຫ້ຍົກເລີກ.

ອີງຕາມບັນດາຄຳສັ່ງທີ່ອອກມາໂດຍສານສູງ, ຄູ່ກໍຣະນີການຟ້ອງຮ້ອງຕ້ອງໄດ້ມອບລາຍຊື່ບຸກຄົນທີ່ຕົນເຫັນດີວ່າເປັນສະມາຊິກຂອງສະມາຄົມ ຕໍ່ຜູ້ຄຸ້ມຄອງຊັບສິນ.

ເຖິງແມ່ນວ່າຊື່ຂອງທ່ານອາດຈະໄດ້ຖືກຍື່ນເຂົ້າໄປຫາຜູ້ຄຸ້ມຄອງຊັບສິນແລ້ວກໍຕາມ, ທ່ານຄວນຍື່ນໃບສມັກຂໍເຂົ້າເປັນສະມາຊິກໂດຍຕິດຫາຜູ້ຄຸ້ມຄອງຊັບສິນຕາມທີ່ຢູ່ທີ່ແຈ້ງໄວ້ຂ້າງລຸ່ມນີ້.

<u>**ທຸກໆຄົນທີ່ມີຈຸດປະສົງຢາກເຂົ້າເປັນສະມາຊິກຂອງສະມາຄົມ, ບໍ່ວ່າຈະໄດ້ຍື່ນໃບຄຳຮ້ອງມາກ່ອນແລ້ວຫຼືບໍ່ກໍຕາມ, ຕ້ອງຍື່ນຄຳຮ້ອງທີ່ຂຽນຕື່ມຢ່າງສົມບູນ ຕໍ່ ຜູ້ຄຸ້ມຄອງຊັບສິນ.**</u>

ທ່ານສາມາດເຂົ້າໄປເອົາໃບຄຳຮ້ອງຂໍເຂົ້າເປັນສະມາຊິກໄດ້ຈາກເວັບໄຊ້ຂອງສະມາຄົມ,
www.watbuddhalavarn.org.au, ຫຼືຂໍເອົາໂດຍຕິດໄດ້ຈາກ ຜູ້ຄຸ້ມຄອງຊັບສິນ ຕາມລາຍລະອຽດທີ່ຂຽນໄວ້ຂ້າງລຸ່ມນີ້.

<u>**ໃບຄຳຮ້ອງທີ່ຂຽນຕື່ມຢ່າງສົມບູນຕ້ອງຮອດຜູ້ຄຸ້ມຄອງຊັບສິນ ບໍ່ໃຫ້ເກີນເວລາ 4:00 pm ຂອງວັນຈັນ ທີ 29 ເດືອນມະກະຣາ (1) ປີ 2018. ໃບຄຳຮ້ອງທີ່ໄດ້ຮັບຫຼັງຈາກເວລາດັ່ງກ່າວຈະບໍ່ໄດ້ຖືກນຳໄປພິຈາລະນາ.**</u>

ຖ້າມີຄຳຖາມໃດໆໃຫ້ສອບຖາມກັບ Mr Alan Ma ຫຼື Ms Casey Byrne ທີ່ BPS Recovery.

ທາງ ອີເມລ ທີ່: enquiries@bpsrecovery.com.au

ທາງໂທຣະສັບ: (02) 8233 2500

ໂປດສັງເກດ BPS Recovery ຈະໄດ້ປິດນັບຈາກວັນສຸກ 22 ທັນວາ (12) 2017 ຈົນເຖິງ 2 ມະກະຣາ (1) 2018.